**ການຈັດຫາເງິນທຶນສະໜັບສະໜູນການຈັດຕັ້ງປະຕິບັດໂຄງການລະບຸຕົນເອງ (SDP)**

ຕາມທີ່ລະບຸໄວ້ໃນຈົດໝາຍທີ່ຄັດຕິດມາພ້ອມນີ້ ຕາມປະມວນກົດໝາຍສະຫວັດດີການແລະສະຖາບັນ (WIC) ມາດຕາ 4685.8(f) ມີການຈັດຫາເງິນທຶນໃຫ້ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດໂຄງການ SDP. ການນຳໃຊ້ເງິນທຶນເຫຼົ່ານີ້ທີ່ຈະມີຂຶ້ນ, ກະບວນການໃນການຕັດສິນໃຈແລະນຳໃຊ້ເງິນທຶນເຫຼົ່ານີ້ ແລະການລາຍງານຂອງສູນເຣຈິນັລ ມີລາຍລະອຽດຂ້າງລຸ່ມນີ້.

| ຂັ້ນຕອນ | ຄຳອະທິບາຍ |
|---|---|
| **ຂົງເຂດສຳຄັນລຳດັບທຳອິດໃນການນຳໃຊ້ເງິນທຶນ** | ຂົງເຂດສຳຄັນລຳດັບທຳອິດໃນການຈັດຫາເງິນທຶນໃຫ້ລວມເຖິງ:<br>• ***ການສັນຫາແລະຝຶກອົບຮົມການວາງແຜນທີ່ເນັ້ນບຸຄຄົນເປັນສູນກາງ ແລະຜູ້ໃຫ້ບໍລິການດ້ານການກຳກັບດູແລຕົນເອງ (SD) ແລະຜູ້ຊ່ວຍເຫຼືອອິດສະຫຼະ*** - ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເພີ່ມຈຳນວນຜູ້ໃຫ້ບໍລິການວາງແຜນແລະສະໜັບສະໜູນ SD ທີ່ເນັ້ນບຸຄຄົນເປັນສູນກາງ ແລະຜູ້ຊ່ວຍເຫຼືອອິດສະຫຼະ ໂດຍເນັ້ນໃສ່ການເພີ່ມຈຳນວນຜູ້ໃຫ້ບໍລິການສອງພາສາ/ຫຼາຍພາສາ ແລະສອງວັດທະນະທຳ/ຫຼາຍວັດທະນະທຳ. ເຊິ່ງອາດລວມເຖິງ ແຕ່ບໍ່ຈຳກັດສະເພາະການສັນຫາ, ການພັດທະນາ ແລະ/ຫຼືການຈັດໃຫ້ມີການຝຶກອົບຮົມ, ການແປພາສາ/ນາຍພາສາ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຈັດໃຫ້ມີການຝຶກອົບຮົມ.<br>• ***ກຸ່ມຄວາມຮ່ວມມື/ການປະຊຸມປະຕິບັດການ*** – ການປະຊຸມຢ່າງຕໍ່ເນື່ອງ ແລະ/ຫຼື ເປັນໄລຍະສຳລັບຜູ້ເຂົ້າຮ່ວມແລະຄອບຄົວ ແລະຜູ້ໃຫ້ບໍລິການ ເພື່ອສ້າງໂອກາດໃນການຮຽນຮູ້ແລະແກ້ໄຂບັນຫາ. ຄ່າໃຊ້ຈ່າຍອາດຈະລວມເຖິງ ແຕ່ບໍ່ຈຳກັດສະເພາະຄ່າໃຊ້ຈ່າຍໃນການເດີນທາງຂອງວິທະຍາກອນ/ຜູ້ບັນຍາຍ, ການແປພາສາ/ນາຍພາສາ, ສື່ການຮຽນ ແລະຄ່າໃຊ້ຈ່າຍໃນການເຊົ່າສະຖານທີ່ປະຊຸມ. ອາດຈະຕ້ອງປະສານງານກັບຄະນະກຳມະການ LVAC/ຜູ້ເຂົ້າຮ່ວມໃນຂົງເຂດອື່ນ ເພື່ອເພີ່ມຂອບເຂດຂອງໂອກາດໃນການຮຽນຮູ້/ການແບ່ງປັນຂໍ້ມູນ.<br>• ***ການຝຶກອົບຮົມ/ການປະຊຸມປະຕິບັດການເພື່ອຄວາມພ້ອມຂອງນາຍຈ້າງ*** - ການຝຶກອົບຮົມສຳລັບຜູ້ເຂົ້າຮ່ວມ, ສະມາຊິກໃນຄອບຄົວແລະຜູ້ໃຫ້ບໍລິການ ໂດຍເນັ້ນໃສ່ຄວາມພ້ອມຂອງນາຍຈ້າງ. ການຝຶກອົບຮົມ/ການປະຊຸມປະຕິບັດການຄວນເນັ້ນທີ່ການໃຫ້ຄວາມຮູ້ແລະຊັບພະຍາກອນແກ່ຜູ້ເຂົ້າຮ່ວມເພື່ອຊ່ວຍໃຫ້ເຂົ້າໃຈບົດບາດແລະຄວາມຮັບຜິດຊອບໃນຖານະນາຍຈ້າງສຳລັບຜູ້ເຂົ້າຮ່ວມທີ່ສົນໃຈນຳໃຊ້ຮູບແບບນາຍຈ້າງຮ່ວມກັນແລະນາຍຈ້າງດຽວ. ຄ່າໃຊ້ຈ່າຍອາດຈະລວມເຖິງ ແຕ່ບໍ່ຈຳກັດສະເພາະການພັດທະນາ ແລະ/ຫຼືການຈັດໃຫ້ມີການຝຶກອົບຮົມ, ການແປພາສາ/ນາຍພາສາ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຈັດໃຫ້ມີການຝຶກອົບຮົມ. |

| | |
|---|---|
| | • ***ການຝຶກອົບຮົມຮ່ວມ*** - ການຝຶກອົບຮົມສຳລັບຜູ້ເຂົ້າຮ່ວມ, ຄອບຄົວ, ເຈົ້າໜ້າທີ່ສູນເຣຈິນັລ ແລະສະມາຊິກຄະນະກຳມະການທີ່ປຶກສາອາສາສະໝັກທ້ອງຖິ່ນ ໂດຍມຸ່ງເນັ້ນການຝຶກອົບຮົມຜູ້ສະໜັບສະໜູນຊ່ວຍເຫຼືອຕົນເອງແລະຄອບຄົວຈາກຊຸມຊົນທີ່ຫຼາກຫຼາຍທີ່ເປັນຊົນກຸ່ມນ້ອຍທີ່ບໍ່ໄດ້ຮັບໂອກາດເທົ່າທຽມກັນກັບປະຊາກອນເຊື້ອຊາດອື່ນໃນໂຄງການລະບຸຕົນເອງ; ການຝຶກອົບຮົມຮ່ວມຄວນມຸ່ງເນັ້ນໂອກາດໃນການຮຽນຮູ້ຮ່ວມກັນ ເຊິ່ງຈະເພີ່ມຄວາມເຂົ້າໃຈຮ່ວມກັນຂອງທຸກຄົນທີ່ກ່ຽວຂ້ອງກັບໂຄງການ SDP. ຄ່າໃຊ້ຈ່າຍອາດຈະລວມເຖິງ ແຕ່ບໍ່ຈຳກັດສະເພາະການພັດທະນາ ແລະ/ຫຼືການຈັດໃຫ້ມີການຝຶກອົບຮົມ, ການແປພາສາ/ນາຍພາສາ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຈັດໃຫ້ມີການຝຶກອົບຮົມ.<br>• ***ການສະໜັບສະໜູນ/ການໃຫ້ຄຳແນະນຳເພື່ອການປ່ຽນຜ່ານໄປສູ່ໂຄງການ SDP*** - ການສະໜັບສະໜູນຜູ້ເຂົ້າຮ່ວມໃນການປ່ຽນຜ່ານໄປສູ່ໂຄງການ SDP. ຂົງເຂດທີ່ໄດ້ຮັບການສະໜັບສະໜູນອາດຈະລວມເຖິງ ແຕ່ບໍ່ຈຳກັດສະເພາະການຕັດສິນໃຈວ່າຮູບແບບການບໍລິການດ້ານການຈັດການທາງດການເງິນໃດທີ່ເໝາະສົມທີ່ສຸດສຳລັບຜູ້ເຂົ້າຮ່ວມ, ຄຳແນະນຳສຳລັບການສັນຫາ/ການຈ້າງພະນັກງານ ແລະວິທີການຈັດທຳແຜນສຳຮອງໃນການຈັດຫາພະນັກງານ<br>• ***ການພັດທະນາແຜນການໃຊ້ຈ່າຍເບື້ອງຕົ້ນ*** - ສະໜັບສະໜູນໃນການພັດທະນາການນຳໃຊ້ງົບປະມານສ່ວນບຸຄຄົນຂອງຜູ້ເຂົາຮ່ວມຜ່ານແຜນການໃຊ້ຈ່າຍ ເຊິ່ງອາດຈະລວມເຖິງການໃຫ້ຄຳປຶກສາກັບການບໍລິການດ້ານການຈັດການທາງດການເງິນ.<br>• ***ຄວາມຈຳເປັນທີ່ລະບຸເພີ່ມເຕີມ*** - ລາຍການ/ກິດຈະກຳທີ່ຈະສະໜັບສະໜູນຄວາມຕ້ອງການຂອງຜູ້ເຂົ້າຮ່ວມແລະການຈັດຕັ້ງປະຕິບັດໂຄງການ. |
| **ກຳນົດວ່າຄວນຈະໃຊ້ເງິນທຶນແນວໃດ** | ຄະນະກຳມະການ LVAC ແລະສູນເຣຈິນັລຄວນຮ່ວມກັນປະເມີນຄວາມຈຳເປັນຂອງທ້ອງຖິ່ນໃນການດຳເນີນການຕາມ SDP ເພື່ອພິຈາລະນາການນຳໃຊ້ເງິນທຶນທີ່ມີຢູ່ໃຫ້ເກີດປະໂຫຍດສູງສຸດ. ຈາກການປະເມີນຮ່ວມກັນນີ້ ຄວນມີການພັດທະນາຂົງເຂດສຳຄັນລຳດັບທຳອິດ (ຂ້າງເທິງ) ທີ່ຈະໄດ້ຮັບເງິນທຶນ ລວມທັງຈຳນວນເງິນໂດຍປະມານທີ່ຈະນຳໃຊ້ສຳລັບແຕ່ລະຂົງເຂດທີ່ເລືອກ. ໃນເວລານີ້ບໍ່ຈຳເປັນຕ້ອງມີການປະມານການເປັນລາຍລະອຽດແຍກລາຍການສຳລັບແຕ່ລະຂົງເຂດທີ່ລະບຸ. ຢ່າງໃດກໍ່ຕາມ ການປຶກສາຫາລືກ່ຽວກັບຄ່າໃຊ້ຈ່າຍໂດຍລະອຽດບາງສ່ວນເຫຼົ່ານີ້ອາດຈະຊ່ວຍໃຫ້ຮູ້ຂໍ້ມູນເພື່ອໃຊ້ໃນການປະມານການໄດ້. |

| | |
|---|---|
| | ເມື່ອໄດ້ເຮັດຂໍ້ຕົກລົງກ່ຽວກັບການນໍາໃຊ້ເງິນທຶນແລ້ວ ຄະນະກໍາມະການ LVAC ແລະ ສູນເຣຈີນັລຈະຕ້ອງຮ່ວມກັນລາຍງານສິ່ງຕໍ່ໄປນີ້ໄປທີ່ sdp@dds.ca.gov:<br><br>• ລາຍຊື່ຊຶງເຂດສໍາຄັນລໍາດັບທໍາອິດທີ່ຈະໄດ້ຮັບເງິນທຶນ;<br>• ປະມານການຈໍານວນເງິນສະໜັບສະໜູນທີ່ຈັດສັນໃຫ້ແຕ່ລະຊຶງເຂດທີ່ສໍາຄັນ; ແລະ<br>• ຄໍາອະທິບາຍໂດຍຫຍໍ້ກ່ຽວກັບວິທີຕັດສິນໃຈ.<br><br>ສາມາດປ່ຽນແປງໄດ້ຢ່າງຕໍ່ເນື່ອງ ຕາມຄວາມຈໍາເປັນທີ່ປ່ຽນແປງຂອງຜູ້ເຂົ້າຮ່ວມ. ຢ່າງໃດກໍ່ຕາມ ການນໍາໃຊ້ເງິນທຶນຕ້ອງສືບຕໍ່ສອດຄ່ອງກັບກົດໝາຍ ແລະຄໍາແນະນໍານີ້ ແລະ ການຕັດສິນໃຈກ່ຽວກັບການປ່ຽນແປງໃດໆຈະຕ້ອງດໍາເນີນການຮ່ວມກັນໂດຍຄະນະກໍາມະກາ ນ LVAC ແລະສູນເຣຈີນັລ. |
| **ກະແສເງິນທຶນ** | ຈໍານວນເງິນທຶນທີ່ລະບຸໄວ້ໃນໜ້າຕໍ່ໄປໄດ້ຮັບການຈັດສັນໃຫ້ກັບສູນເຣຈີນັລແຕ່ລະແຫ່ງ. ຕາມທີ່ໄດ້ລະບຸໄວ້ກ່ອນໜ້ານີ້ ການຕັດສິນໃຈກ່ຽວກັບການນໍາໃຊ້ເງິນທຶນເຫຼົ່ານີ້ຈະຕ້ອງເຮັດຮ່ວມກັນໂດຍຄະນະກໍາມະການ LVAC ແລະສູນເຣຈີນັລ. ຈາກນັ້ນສູນເຣຈີນັລ ຈະຈ່າຍເງິນຄືນໃຫ້ກັບບຸກຄົນ ແລະ/ຫຼື ອົງການຈັດຕັ້ງທີ່ໃຫ້ບໍລິການ. |
| **ການຕິດຕາມກວດສອບ** | ສູນເຣຈີນັລຈະຕ້ອງກອກບົດລາຍງານສະຖານະສໍາລັບແຕ່ລະໂຄງການປັດຈຸບັນແຕ່ລະໂຄງກ າານພາຍໃນປີງົບປະມານທີ່ເປີດ. ກໍານົດສົ່ງບົດລາຍງານວັນທີ 31 ເດືອນມີນາ ແລະວັນທີ 30 ເດືອນກັນຍາຂອງທຸກປີ. ທາງພະແນກຈະສົ່ງຄໍາເຕືອນເມື່ອຄົບກໍານົດສົ່ງບົດລາຍງານ ພ້ອມດ້ວຍລີ້ງການລາຍງານທີ່ກ່ຽວຂ້ອງ. |

ເງິນທຶນພື້ນຖານໄດ້ຖືກຈັດສັນເທົ່າທຽມກັນລະຫວ່າງສູນເຣຈິນັລແຕ່ລະແຫ່ງ.
ເງິນທຶນຄົງເຫຼືອໄດ້ຖືກຈັດສັນຕາມສັດສ່ວນຂອງບຸຄຄົນທີ່ໃຊ້ງານຢູ່ (ສະຖານະ 2) ທີ່ລະບຸຕົນເອງວ່າເປັນຄົນເຊື້ອຊາດອື່ນທີ່ບໍ່ແມ່ນຄົນຜິວຂາວໃນສູນເຣຈິນັລແຕ່ລະແຫ່ງ.

**ເງິນທຶນສະໜັບສະໜູນຜູ້ເຂົ້າຮ່ວມໂຄງການ SDP - ປີງົບປະມານ 2024/2025***

| **ສູນເຣຈິນັລ** | **ເງິນທຶນພື້ນຖານ** | **ສ່ວນແບ່ງເງິນທຶນຂອງບຸຄຄົນທີ່ໃຊ້ງານຢູ່ທີ່ລະບຸຕົນເອງວ່າມີເຊື້ອຊາດອື່ນທີ່ບໍ່ແມ່ນຄົນຜິວຂາວ**** | **ແຫຼ່ງເງິນທຶນທີ່ມີຢູ່** |
|---|---:|---:|---:|
| **ACRC** | $47,620 | $61,503.57 | $109,123.57 |
| **CVRC** | $47,620 | $69,656.81 | $117,276.81 |
| **~~ELARC~~ *RCEB*** | $47,620 | $65,342.68 | $112,962.68 |
| **~~FDLRC~~ *ELARC*** | $47,620 | $44,048.49 | $91,668.49 |
| **FNRC** | $47,620 | $9,387.51 | $57,007.51 |
| **~~GGRC~~ *FDLRC*** | $47,620 | $29,435.74 | $77,055.74 |
| **~~HRC~~ *GGRC*** | $47,620 | $24,268.91 | $71,888.91 |
| **~~IRC~~ *HRC*** | $47,620 | $50,142.00 | $97,762.00 |
| **~~KRC~~ *IRC*** | $47,620 | $121,800.13 | $169,420.13 |
| **~~NBRC~~ *KRC*** | $47,620 | $32,850.45 | $80,470.45 |
| **~~NLACRC~~ *NBRC*** | $47,620 | $20,386.98 | $68,006.98 |
| **~~RCEB~~ *NLACRC*** | $47,620 | $83,712.77 | $131,332.77 |
| **RCOC** | $47,620 | $57,960.38 | $105,580.38 |
| **RCRC** | $47,620 | $5,194.09 | $52,814.09 |
| **SARC** | $47,620 | $46,879.15 | $94,499.15 |
| **~~SCLARC~~ *SDRC*** | $47,620 | $98,185.34 | $145,805.34 |
| **~~SDRC~~ *SGPRC*** | $47,620 | $44,757.13 | $92,377.13 |
| **~~SGPRC~~ *SCLARC*** | $47,620 | $67,694.43 | $115,314.43 |
| **TCRC** | $47,620 | $34,267.72 | $81,887.72 |
| **VMRC** | $47,620 | $44,433.96 | $92,053.96 |
| **WRC** | $47,620 | $28,080.77 | $75,700.77 |
| **TOTAL** | **$1,000,020** | **$1,039,989.00** | **$2,040,009.00** |

*ເງິນທຶນຈະຕ້ອງໃຊ້ໃຫ້ໝົດພາຍໃນເດືອນມີນາ 2027.

**ແຫຼ່ງທີ່ມາຂອງຂໍ້ມູນນີ້ແມ່ນ Client Master File ເຊິ່ງເປັນແຫຼ່ງຂໍ້ມູນຫຼັກກ່ຽວກັບສະຖານະກໍລະນີຂອງບຸຄຄົນທີ່ສະໝັກຂໍຮັບບໍລິການທີ່ໄດ້ຮັບທຶນຈາກພະແນກ ເຊັ່ນດຽວກັນກັບບຸຄຄົນທີ່ກຳລັງໄດ້ຮັບບໍລິການໃນເດືອນພຶດສະພາ 2024.